ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

================

ແຂວງເຊກອງ

ເຈົ້າແຂວງ

ເລກທີ:...13.../ຈຂ,ຊກ

ເຊກອງ,ລົງວັນທີ:...27.02.2015...

# ຂໍ້ຕົກລົງ

## ວ່າດ້ວຍການຫັນປ່ຽນທີ່ດິນປ່າໄມ້ ( ປ່າປ້ອງກັນແຫ່ງຊາດ ) ເປັນດິນປຸກສ້າງ

- ອີງຕາມກົດໝາຍການປົກຄອງທ້ອງຖິ່ນ ແຫ່ງ ສປປລາວ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003 ໝວດ III ມາດຕາ 14 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມໜັງສືສະເໜີ ຂອງ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ສະບັບເລກທີ 069/ພຊສ, ລົງວັນທີ 17 / 2 / 2015.

## ເຈົ້າແຂວງຕົກລົງ:

ມາດຕາ 01 : ເຫັນດີຫັນປ່ຽນທີ່ດິນປ່າໄມ້ ( ປ່າປ້ອງກັນແຫ່ງຊາດ ) ທີ່ໂຄງການອະນຸລັກຊີວະນາໆພັນ ຕາມແລວເຊື່ອມຕໍ່ ( BCC ) ໄດ້ກຳນົດໄວ້ ໃນເຂດຄຸ້ມຄອງຂອງ 02 ບ້ານຄື: ບ້ານດາກຕະອອກນ້ອຍ ແລະ ບ້ານດາກໂດມ ເມືອງດາກຈຶງ ແຂວງເຊກອງ ໃນຈຳນວນເນື້ອທີ່ 100 ຮຕ ( ໜຶ່ງຮ້ອຍເຮັກຕາ ) ມາເປັນດິນປຸກສ້າງ ເພື່ອນຳໃຊ້ເປັນເຂດກໍ່ສ້າງເສດຖະກິດສະເພາະ ( ເຂດການຄ້າຊາຍແດນ ) ຂອງແຂວງເຊກອງ.

ມາດຕາ 02 : ມອບໃຫ້ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ພ້ອມກັນຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ.

ມາດຕາ 03 : ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ທີ່ລົງລາຍເຊັນເປັນຕົ້ນໄປ.

ຣ. ເຈົ້າແຂວງ-ແຂວງເຊກອງ

ສົມຊາກ ສາລິພູນ